ກະຊວງອຸດສາຫະກຳແລະການຄ້າ
ກົມການຄ້າພາຍໃນ
ຮັບ ເລກທີ: 1591
ວັນທີ: 10.10.18

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 67 /ນຍ
ນະຄອນຫລວງວຽງຈັນ, ວັນທີ 04.10.2018

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຄວບຄຸມການແຂ່ງຂັນທາງທຸລະກິດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມກົດໝາຍ ວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015.
- ອີງຕາມໜັງສືສະເໜີ ສະບັບເລກທີ 1298/ອຄ.ກຄພນ, ລົງວັນທີ 19 ກັນຍາ 2018 ຂອງກະຊວງອຸດສາຫະກຳ ແລະ ການຄ້າ.

## ນາຍົກລັດຖະມົນຕີ ຕົກລົງ :

ມາດຕາ 1 : ແຕ່ງຕັ້ງຄະນະກຳມະການຄວບຄຸມການແຂ່ງຂັນທາງທຸລະກິດ (ຄຂທ) ຊຶ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ຮອງລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ເປັນປະທານ ທັງ ເປັນຜູ້ປະຈຳການ;
2. ທ່ານ ຫົວໜ້າກົມຄຸ້ມຄອງ, ພັດທະນາວິສາຫະກິດ ແລະ ປະກັນໄພ, ກະຊວງການເງິນ ເປັນຮອງປະທານ;
3. ທ່ານ ຫົວໜ້າກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ ເປັນຮອງປະທານ;
4. ທ່ານ ຫົວໜ້າກົມແຜນການ ແລະ ການເງິນ, ກະຊວງກະສິກຳ ແລະ ປ່າໄມ້ ເປັນຄະນະ;
5. ທ່ານ ຫົວໜ້າກົມກົດໝາຍ, ກະຊວງຍຸຕິທຳ ເປັນຄະນະ;
6. ທ່ານ ຫົວໜ້າອົງການດັດສົມໂທລະຄົມ, ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ເປັນຄະນະ;
7. ທ່ານ ຫົວໜ້າສູນຄົ້ນຄວ້ານະໂຍບາຍພັດທະນາວິສາຫະກິດ ແລະ ການເຊື່ອມໂຍງສາກົນ, ສະຖາບັນຄົ້ນຄວ້າເສດຖະກິດແຫ່ງຊາດ ເປັນຄະນະ;
8. ທ່ານ ຫົວໜ້າກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ ເປັນຄະນະ;
9. ທ່ານ ເລຂາທິການສະພາການຄ້າ ແລະ ອຸດສາຫະກຳ ແຫ່ງຊາດລາວ ເປັນຄະນະ;
10. ທ່ານ ຄະນະປະຈຳ ສະພາທະນາຍຄວາມ ເປັນຄະນະ;
11. ທ່ານ ຫົວໜ້າກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ເປັນຄະນະ, ທັງເປັນຫົວໜ້າກອງເລຂາ.

ມາດຕາ 2 : ຄະນະດັ່ງກ່າວ ມີໜ້າທີ່ ແລະ ສິດ ດັ່ງນີ້:

- ປະຕິບັດສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 50 ຂອງກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015;

- ຄົ້ນຄວ້າ ແລະ ນຳສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ພິຈາລະນາສ້າງຕັ້ງ ຄຂທ ຂັ້ນແຂວງ ຕາມທີ່ກຳນົດໄວ້ມາດຕາ 49 ຂອງກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015;
- ຄົ້ນຄວ້າ ແລະ ນຳສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແຕ່ງຕັ້ງເຈົ້າໜ້າທີ່ກວດກາການແຂ່ງຂັ້ນທຸລະກິດ ຕາມທີ່ກຳນົດໄວ້ໃນມາດຕາ 52 ຂອງກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015;
- ຄົ້ນຄວ້າ ແລະ ນຳສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ແຕ່ງຕັ້ງພະນັກງານພາຍໃນກະຊວງອຸດສາຫະກຳ ແລະ ການຄ້າ ເປັນໜ່ວຍງານຊ່ວຍວຽກຂອງ ຄຂທ ໃນການຈັດຕັ້ງປະຕິບັດວຽກງານການແຂ່ງຂັນທາງທຸລະກິດ ໃນຊ່ວງໄລຍະທີ່ຍັງບໍ່ທັນໄດ້ສ້າງຕັ້ງ ກອງເລຂາ ຂອງ ຄຂທ;
- ຄົ້ນຄວ້າ ແລະ ນຳສະເໜີລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອນຳສະເໜີຕໍ່ລັດຖະບານ ພິຈາລະນາສ້າງຕັ້ງ ກອງເລຂາຂອງ ຄຂທ ທີ່ມີຖານະທຽບເທົ່າກົມ ຂຶ້ນກັບກະຊວງອຸດສາຫະກຳ ແລະ ການຄ້າ ຕາມທີ່ກຳນົດໄວ້ໃນມາດຕາ 51 ຂອງກົດໝາຍວ່າດ້ວຍການແຂ່ງຂັນທາງທຸລະກິດ ສະບັບເລກທີ 60/ສພຊ, ລົງວັນທີ 14 ກໍລະກົດ 2015 ໃນເວລາທີ່ມີຄວາມພ້ອມທາງດ້ານບຸກຄະລາກອນ ແລະ ງົບປະມານ ເພື່ອເປັນເສນາທິການໃຫ້ ຄຂທ ໃນການຈັດຕັ້ງປະຕິບັດວຽກງານ ການແຂ່ງຂັນທາງດ້ານທຸລະກິດ ໃຫ້ມີປະສິດທິຜົນສູງ;
- ປະຕິບັດສິດ ແລະ ໜ້າທີ່ອື່ນໆ ຕາມການມອບໝາຍຂອງລັດຖະມົນຕີກະຊວງອຸດສາຫະກຳ ແລະ ການຄ້າ.

ມາດຕາ 3 : ມອບໃຫ້ລັດຖະມົນຕີກະຊວງກະຊວງອຸດສາຫະກຳ ແລະ ການຄ້າ ເປັນຜູ້ຊີ້ນຳຮອບດ້ານ ຕໍ່ການຈັດຕັ້ງປະຕິບັດວຽກງານຂອງ ຄຂທ. ພ້ອມທັງ ພິຈາລະນາສ້າງຕັ້ງ ຄຂທ ຂັ້ນແຂວງ, ນະຄອນຫຼວງວຽງຈັນ ແຕ່ງຕັ້ງເຈົ້າໜ້າທີ່ກວດກາການແຂ່ງຂັນທາງທຸລະກິດ ແລະ ແຕ່ງຕັ້ງພະນັກງານວິຊາການ ທີ່ກ່ຽວຂ້ອງ ເພື່ອປະກອບເຂົ້າໃນກອງເລຂາຊ່ວຍວຽກ ຄຂທ ຕາມຄວາມເໝາະສົມ.

ມາດຕາ 4 : ໃຫ້ບັນດາກະຊວງ ແລະ ພາກສ່ວນກ່ຽວຂ້ອງ ແຕ່ງຕັ້ງຜູ້ຕາງໜ້າຂອງຕົນທີ່ຮັບຜິດຊອບວຽກງານກ່ຽວຂ້ອງດັ່ງກ່າວ ຕາມທີ່ກຳນົດໃນມາດຕາ 1 ຂອງຂໍ້ຕົກລົງສະບັບນີ້ ແລ້ວແຈ້ງໃຫ້ກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນ 10 ວັນລັດຖະການ ນັບແຕ່ມື້ອອກຂໍ້ຕົກລົງສະບັບນີ້ ເພື່ອປະກອບເຂົ້າໃນຄະນະ. ໃນກໍລະນີມີການຊັບປ່ຽນຜູ້ຮັບຕຳແໜ່ງ ກໍໃຫ້ແຈ້ງກະຊວງອຸດສາຫະກຳ ແລະ ການຄ້າ ພາຍໃນ 10 ວັນລັດຖະການ ນັບແຕ່ມື້ປະກາດເປັນທາງການ ສຳລັບການຊັບປ່ຽນຜູ້ຮັບຕຳແໜ່ງ.

ມາດຕາ 5 : ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ, ການຈັດຕັ້ງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍບັນດາທ່ານ ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ມາດຕາ 6 : ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ